# ສຶກສາການຈະເລີນເຕີບໂຕ ແລະ ຜົນຜະລິດຂອງຫອມປ້ອມໃນລະດູຝົນ

# Study on Growth and Yield of Coriander in rainingseason

**ນັກສຶກສາ:** ທ. ວິຊຸນ ພັນດາວົງ, ນ. ພຸດວິໄລ ແກ້ວດວງວິຈິດ

**ອາຈານຊີ້ນຳ:** ໂນແອນ ບົວທອງ

**ພາກວິຊາ:** ປູກພືດ, ປີ 2009.

## ບົດຄັດຫຍໍ້

ໄດ້ລົງເກັບກຳຂໍ້ມູນການປູກຜັກຫອມປ້ອມໃນລະດູຝົນ ເພື່ອຫາຂໍ້ມູນການຈະເລີນເຕີບໂຕ ແລະ ຂໍ້ມູນທາງດ້ານຜົນຜະລິດ ໝານຜັກດັ່ງກ່າວນັ້ນມີຄວາມກວ້າງ 1,35 m, ຍາວ 4 m ແລະ ສູງ 20 cm ເຊິ່ງໃນແຕ່ລະໝານແມ່ນມຸງດ້ວຍຜ້າສະແລນສີດຳ ເພື່ອປ້ອງກັນເມັດຝົນ ໂດຍໄດ້ສຶກສາຢູ່ (nursery) ຂອງຄະນະກະເສດສາດ ຊຶ່ງໄດ້ເລີ່ມແຕ່ວັນທີ 15/9/2008 ເຖິງ8/11/2008. ທາງດ້ານການຈະເລີນເຕີບໂຕເຫັນໄດ້ວ່າ: ຜັກຫອມປ້ອມທີ່ປູກ ກໍ່ຈະເລີນເຕີບໂຕໄດ້ດີພໍສົມຄວນ ເຊິ່ງສາມາດສະເລ່ຍລວງສູງ ຂອງລຳຕົ້ນເປັນ cm ໃນແຕ່ລະໄລຍະ ຂອງການວັດແທກໄດ້ດັ່ງນີ້: 4.66, 6, 9.33 ແລະ 11.5 ທີ່ອາຍຸ 10, 18, 25 ແລະ 32 ວັນຕາມລຳດັບ. ທາງດ້ານຜົນຜະ ລິດເຫັນໄດ້ວ່າ: ຜັກຫອມປ້ອມໃຫ້ຜົນຜະລິດໂດຍສະເລ່ຍແມ່ນໄດ້ຢູ່ 5.2 kg / ໝານ, ໄດ້ຜົນຜະ ລິດລວມທັງ 5 ໝານແມ່ນໄດ້ຢູ່ 26 kg / 27 m$^2$ ແລະ ໄດ້ຢູ່ 1540.74 kg / ໄລ່. ທາງດ້ານການ

ຕະຫລາດເຫັນໄດ້ວ່າ: ຄ່າລຸ້ຍຫຽ້ນທຶນຄົງທີ່ 42.500 ກີບ/ 27 m$^2$ ຫລື 2.518.518 ກີບ/ໄລ່, ທຶນ ໝູນວຽນ 49.000 ກີບ/ 27 m$^2$ ຫລື 2.903.703 ກີບ/ໄລ່, ລາຍຮັບທັງໝົດ 208.000 ກີບ/ 27 m$^2$ ຫລື 12.325.920 ກີບ/ໄລ່ ແລະ ລາຍຮັບກະສິກຳ (ກຳໄລ) 116.500 ກີບ/ 27 m$^2$ ຫລື 6.903.699 ກີບ/ໄລ່.